## ດ້ານປະຫວັດສາດ

ຮາກເຫງົ້າ ຂອງການເລີ້ມຕົ້ນການເກັບກຳນີ້ ໄດ້ເລີ້ມມາຈາກ ກຸ່ມ ປະຊາກອນ ຊາວເອເຊັຍຕະວັນອອກສຽງໃຕ້ເອງ. ທ່ານ ດອກເຕີ ແຝ່ນ ກາວ ດົງ ຊຶ່ງ ເປັນສະມາຊິກ ຂອງສະມາຄົມ ວຽດນາມອະເມຣິກັນ ປະຈຳເຂດ ອໍເຣນຊ ຄາວຕີ (Orange County Vietnamese American) ໄດ້ສເນີຄວາມເຫັນ ເປັນເທື່ອທຳອິດ ໃຫ້ແກ່ເຈົ້າຫນ້າທີ່ ມະຫາວິທະຍາລັຍ ໃນຮາວປີ 1985 (mid-1980s).

ອີງຕາມຄວາມຕ້ອງການ, ໃນປີ 1987 ຫໍສະມຸດທີ່ ຢູຊີໄອ ຈຶ່ງໄດ້ ຈັດຕັ້ງ ພະແນກເກັບກຳມູນເດີມ ຂຶ້ນ ເພື່ອຈຸດປະສົງ ໃນການບັນທຶກຄວາມເປັນມາ ຂອງປະຊາກອນ ຊາວເອເຊັຍກຸ່ມໃຫມ່ ທີ່ຢູ່ໃນເຂດ ອໍເຣນຊ ຄາວຕີ. ອຸປະກອນທີ່ໄດ້ມາໃນຕອນຕົ້ນ ແມ່ນໄດ້ມາຈາກ ຜູ້ບໍຣິຈາກ ທົ່ວຣັຖແຄລີຟໍເນັຽ, ພາກອື່ນໆ ຂອງ ສະຫະຣັຖ ແລະ ຕ່າງປະເທດ. ສິ່ງຂອງຫລາຍແນວທີ່ໄດ້ມາ ສະທ້ອນເຖິງ ປະວັດຄວາມເປັນມາ ຂອງພວກບໍຣິຈາກເອງ ກ່ຽວກັບ ການເປັນອົບພະຍົບ ຊຶ່ງປະກອບດ້ວຍຂໍ້ມູນ ກ່ຽວກັບວັທນະທັມ ແລະ ປະວັດສາດ ຂອງບ້ານເກີດ ຂອງເຂົາເຈົ້າ. ການບໍຣິຈາກສ່ວນອື່ນ ແມ່ນມາຈາກພວກ ທີ່ເຮັດວຽກ ກ່ຽວຂ້ອງກັບຊາວອົບພະຍົບ ແລະ ມາຈາກ ອາດີດ ທະຫານອະເມຣິກັນເອງ.

ການເກັບກຳມູນເດີມນີ້ ໄດ້ເຕີບໂຕຂຶ້ນ, ໄດ້ຂຍາຍຕົວຮ່ວມເອົາຫລາຍຊົນ ເຜົ່າ ທີ່ມາຈາກເອເຊັຍຕະວັນອອກສຽງໃຕ້ ທີ່ອາສັຍຢູ່ໃນສະຫະຣັຖ ຊຶ່ງ ຮວມເຖິງເຜົ່າ ຈາມ, ໄທດຳ, ຂະເມ, ມຽນ, ແລະ ລະຫູ. ຄວາມເນັ້ນຫນັກພິເສດ ຂອງການເກັບກຳມູນເດີມ ໃນເຂດອໍເຣນຊ໌ ຄາວຕີ ແລະ ທົ່ວຣັຖແຄລີຟໍເນັຽ ໄດ້ຂະຍາຍໄປເລື້ອຍໆ. ມັນເປັນພາຣະຫນ້າທີ່ ຂອງພະແນກເກັບກຳມູນເດີມ ທີ່ຈະຮັກສາ ແລະ ບັນທຶກ ຄວາມເປັນຢູ່ທາງດ້ານສັງຄົມ, ວັທນະທັມ, ສາສນາ, ການເມືອງ ແລະ ເສຖກິດ ຂອງຊາວອະເມຣິກັນ ທີ່ກຳເນີດ ມາຈາກພາກພື້ນເອເຊັຍ ຕາເວັນອອກສຽງໃຕ້ ຊຶ່ງເລີ້ມຕົ້ນ ແຕ່ການຫລົບຫນີ ອອກຈາກປະເທດ ໃນປີ 1975 ແລະ ພາຣະກິດນີ້ຈະຕິດຕາມໄປເລື້ອຍໆ ແລະ ຕໍ່ໆໄປໃນອະນາຄົດ ຕາມຄວາມຂຍາຍຕົວຂອງກຸ່ມສັງຄົມໃຫມ່ນີ້.

ຄວາມສຳຄັນຂອງພະແນກເກັບກຳມູນເດີມນີ້ ຖືກຮັບຮູ້ໂດຍ ໄດ້ຮັບທຶນ ຈາກ ມູນນິທິ National Endowment for the Humanities and the California State Library.




## ທ່ານຈະຊ່ວຍພະແນກເກັບກຳມູນເດີມໄດ້ໂດຍວິທີໃດ?

ຕລອດເວລາ ທາງພະແນກເກັບກຳມູນເດີມ ໄດ້ຮ້ອງຂໍເອົາການບໍຣິຈາກ ດ້ານ ເອກະສານ ແລະ ວັດຖຸຕ່າງໆ ເພື່ອເອົາເຂົ້າມາປະກອບສວນ ໃຫ້ສົມບູນ ແລະ ເພື່ອເພີ້ມພລັງ ໃຫ້ແກ່ພະແນກຂອງພວກເຮົາ ໂດຍສເພາະ ສິ່ງທີ່ເກັບກຳບັນທຶກ ການເຄື່ອນໄຫວ ຕ່າງໆ ຂອງບຸກຄົນ, ອົງການການຈັດຕັ້ງ, ທຸຣະກິດ ແລະ ເຫດການຕ່າງໆ ພາຍໃນກຸ່ມປະຊາຄົມເອເຊັຍອະເມຣິກັນ ຈາກພາກ ຕາເວັນອອກສຽງໃຕ້. ດັ່ງນັ້ນ ຈຶ່ງຂໍຮ້ອງທ່ານ ກະຣຸນາຕິດຕໍ່ໄປຫາພວກເຮົາ ຖ້າທ່ານມີວັດຖຸຈະ ບໍຣິຈາກ ຫລື ພໍໃຈໃຫ້ພວກເຮົາຖ່າຍຮູບພາບໄວ້.

**Southeast Asian Archive Librarian**
**Southeast Asian Archive**
**Room 360 Langson Library**
**University of California, Irvine Libraries**
**P.O. Box 19557**
**Irvine CA 92623-9557**
**(949) 824-4968**
**seasian@uci.edu**
**sea.lib.uci.edu and**
**seaadoc.lib.uci.edu**

ໃບຂ່າວນີ້ມີໃຫ້ເປັນພາສາອັງກິດ, ຂະເມ, ມົ້ງ, ລາວ ແລະ ວຽດນາມ.

ພິມ ແລະ ເຜີຍແຜ່ດ້ວຍຄວາມສນັບສນູນຈາກ California State Library ພາຍໃຕ້ Library Services and Technology Act.






# ການເກັບກຳເອກະສານ ຄວາມປະສົບການຂອງຊາວເອເຊັຍອະເມຣິກັນ ທີ່ມາຈາກເອເຊັຍ ພາກຕາເວັນອອກສຽງໃຕ້

ພະແນກເກັບກຳມູນເດີມຂອງຊາວເອເຊັຍ
ພາກຕາເວັນອອກສຽງໃຕ້
ຫໍສະມຸດປະຈຳ
ມະຫາວິທຍາລັຍແຄລິຟໍເນັຽ ທີ່
ເອີຣວາຍ

## ພາຣະກິດຂອງພວກເຮົາ

ພະແນກເກັບກຳມູນເດີມ (Archive) ຂອງ ຊາວເອເຊັຍ ພາກຕາເວັນອອກສຽງໃຕ້ ຂອງ ຫໍສະມຸດ ມະຫາວິທຍາລັຍ ແຄລີຟໍເນັຽທີ່ເອີຣວາຍ ມີຈຸດປະສົງ ທີ່ຈະເກັບກຳບັນທຶກ ຄວາມເປັນມາ ຂອງຊາວ ອົບພະຍົບ ແລະ ພວກທີ່ ມາຕັ້ງຖິ່ນຖານໃຫມ່ ຈາກອິນດູຈີນ – ຊຶ່ງມີຊາວ ຂະເມນ ລາວ ແລະ ວຽດນາມ – ທີ່ໄດ້ຍົກຍ້າຍມາຢູ່ ສະຫະຣັຖ ອະເມຣິກາ ຫລັງຈາກ ສິ້ນສົງຄາມວຽດນາມ ໃນປີ 1975. ອີງຕາມ ການສຳຣວດປະຊາກອນ ໃນປີ 2000, ປະຈຸບັນນີ້ ມີປະຊາກອນ ຂະເມນ ລາວ ແລະ ວຽດນາມ ອາສັຍຢູ່ໃນຣັຖ ແຄລີຟໍເນັຽ ມີຈຳນວນເຖິງ 638,000 ຄົນ ຊຶ່ງເທົ່າກັບ 40% ຂອງຈຳນວນປະຊາກອນ ເອເຊັຍ ຕາເວັນອອກສຽງໃຕ້ ທີ່ອາສັຍ ຢູ່ທົ່ວສະຫະຣັຖອະເມຣິກາ. ເຂດອໍເຣນຊຄາວທີ້ (Orange County) ມີປະຊາກອນ ວຽດນາມ ທີ່ຢູ່ນອກປະເທດວຽດນາມ ຫລາຍກວ່າແຫ່ງອື່ນ, ມີປະຊາກອນລາວຢູ່ໃນເຂດ ແຊນດິເອໂກ ແລະ ພາກກາງຂອງຣັຖແຄລີຟໍເນັຽ ແລະ ຢູ່ເຂດ ແຊນປຣານຊິສໂກ ເບເອເຣັຍຈຳນວນນຶ່ງ, ແລະ ມີ ປະຊາກອນ ຂະເມນ ຫລາຍທີ່ສຸດ ທີ່ລອງບີຊ. ອີງຕາມພາບປະຊາກອນສຶກສາ, ຢູຊີໄອ (UCI) ຈຶ່ງເປັນສຖານທີ່ ທີ່ເຫມາະສົມທີ່ສຸດ ໃນການເກັບກຳ, ບັນທຶກ ແລະ ຮັກສາ ຄວາມເປັນມາຂອງປະຊາກອນ ອະເມຣິກັນກຸ່ມໃຫມ່ນີ້.





## ການຮິບໂຮມ

ພະແນກເກັບກໍາມູນເດີມນີ້ ມີເອກະສານຢ່າງກ້ວາງຂວາງ ປັນພາສາ ອັງກິດ ແລະ ເປັນພາສາເອເຊັຍຕ່າງໆ. ການເກັບກໍາໄດ້ເນັ້ນຫນັກໃສ່ ຄວາມເປັນມາ ຂອງຊີວິດໃນສູນອົພະຍົກ ຈາກພວກອົພະຍົກທາງນໍ້າທະເລ ແລະ ທາງດິນ, ການບຸກບື້ນມາຕັ້ງຖິ່ນຖານໃຫມ່ ທີ່ ສະຫະຣັຖ ອະເມຣິກາ ແລະ ທີ່ອື່ນໆ, ການເຕີບໂຕ ແລະ ກ້າວຫນ້າຂອງຊຸມ ເຜົ່າໃຫມ່ນີ້ ແລະ ຢ່າງນ້ອຍ ເທົ່າທີ່ຣວບຣ່ວມມາໄດ້ ກໍແມ່ນ ປະເພນີ ແລະ ປະວັດສາດຂອງ ຂເມນ, ລາວ ແລະ ວຽດນາມ ຊຶ່ງ ໄດ້ສະທ້ອນເຖິງຕົ້ນຕໍວັທນະທັມຂອງຊາວອົພະຍົກນີ້.

ວັດຖຸເອກະສານຕ່າງໆທີ່ມີຢູ່ໃນ ພະແນກເກັບກໍາມູນເດີມ ນີ້ມີ:

- ສິລປະ (ຮູບແຕ້ມ, ຮູບຂຽນ)
- ສິ່ງຂອງທີ່ປະດິດຂຶ້ນ
- ບົດຂຽນຈາກນິຕະສານ ແລະ ຫນັງສືພິມ
- ປື້ມ
- ປື້ມລາຍຊື່ຂອງທຸຣະກິດ
- ຈົດຫມາຍ
- ບົດຄົ້ນຄ້ວາ
- ເອກະສານໂຄສະນາ (ໃບປິວ, ໃບໂຄສະນາ, ລາຍການ ແລະ ອື່ນໆ)
- ພາພຍົນ, ວີດີໂອ, ເທປອັດສຽງ
- ເອກະສານທາງການຣັຖບານ
- ນິຕະສານ ແລະ ຫນັງສືພິມ
- ຈົດຫມາຍຂ່າວ
- ບົດຂໍ້ຂ່າວຈາກຫນັງສືພິມ
- ບັນທຶກການຈັດຕັ້ງ
- ຂໍ້ມູນທີ່ພິມເປັນປື້ມຫົວນ້ອຍໆ
- ເຣື່ອງສັ້ນສ່ວນຕົວ
- ຮູບພາບ
- ໃບຂ່າວໂພສ໌ເຕີ
- ເອກະສານຊ ແນະນໍາຊ າວອົພະຍົກ
- ລາຍງານ
- ການສໍາຣວດ

ພະແນກເກັບກໍາມູນເດີມນີ້ ມີວັດຖຸພິເສດສໍາລັບນັກຄົ້ນຄ້ວາ. ຕົວຢ່າງ:

Mitchell I. Bonner Papers, 1975-1990s. ເອກະສານ ແລະ ຮູບພາບ ກ່ຽວກັບປະຊາຄົມເອເຊັຍອະເມຣິກັນທີ່ມາຈາກພາກຕາເວັນອອກ ສຽງໄຕ້ ໃນເຂດ ແຊນຟຣານຊິສໂກ ເບເອເຣັຍ, ຊຶ່ງເນັ້ນຫນັກໃສ່ຊາວລາວອະເມຣິກັນ.

Kim Hao Papers, 1983-1997. ບົດຂຽນ ທີ່ໄດ້ຖືກພິມ ແລະ ເຜີຍແຜ່ ຂອງ Kim Hao ກ່ຽວກັບການຫລົບຫນີ ຂອງນາງ ແລະ ຄອບຄົວ ອອກຈາກປະເທດວຽດນາມໄປທາງດິນ ຈົນເຖິງ ສູນອົພະຍົກທີ່ປະເທດໄທຍ໌.

Brigitte Marshall Papers, 1980s-1990s. ເອກະສານ ແລະ ວັດຖຸ ບັນທຶກສຽງ ແລະ ພາບ (ໂດຍສະເພາະກ່ຽວກັບຊາວມົ້ງ) ໃນ ສູນອົພະຍົກ ທີ່ປະເທດໄທຍ໌ ແລະ ກ່ຽວກັບການມາຕັ້ງຖິ່ນຖານໃຫມ ຂອງ ເຂົາເຈົ້າ ທີ່ຣັຖແຄລີຟໍເນັຽ, ສ່ວນໃຫຍ່ໃນພາກກາງຂອງຣັຖ (Central Valley).

Southeast Asian Resource Action Center (SEARAC) Records, 1975-1996. ບັນທຶກຈາກສູນກາງທີ່ຕັ້ງຢູ່ ກຸງວໍຊິງຕັນ ດີຊີ ຊຶ່ງ ໄດ້ຈັດຕັ້ງຂຶ້ນ ເພື່ອຊ່ວຍເຫລືອການມາຕັ້ງຖິ່ນຖານໃຫມ່ ຂອງຊາວ ອົພະຍົກທົ່ວປະເທດ.












## ພວກເຮົາຍິນດີຕ້ອນຮັບທຸກໆທ່ານ

ພວກທີ່ຕ້ອງການໃຊ້ພະແນກເກັບກໍາມູນເດີມ ຂອງຊາວເອເຊັຍພາກຕາເວັນອອກສຽງໄຕ້ ກໍແມ່ນ ນັກສຶກສາ ແລະ ສາສດາຈານ ຈາກ ວິທຍາລັຍ ແລະ ມະຫາວິທຍາລັຍ, ນັກຮຽນ ແລະ ຄູສອນ ຊັ້ນ ປະຖົມເຖິງມັທະຍົມ, ພະນັກງານປະຊາສົງເຄາະ, ພວກຮຽກຮ້ອງສິດທິກຸ່ມນ້ອຍຊົນ, ພວກເຜີຍແຜ່ຂ່າວ ແລະ ສໍານັກງານທະນາຍຄວາມ. ທຸກໆຄົນສາມາດໃຊ້ ພະແນກເກັບກໍາມູນເດີມ ໄດ້ໂດຍບໍ່ຈໍາເປັນຕ້ອງມີ ໃບຮັບຮອງ ຫລື ອະນຸຍາດລ່ວງຫນ້າກ່ອນແຕ່ຢ່າງໃດ. ແຕ່ທຸກຄົນ ຕ້ອງມີບັດປະຈໍາຫໍສະມຸດຂອງມະຫາວິທຍາລັຍ ເພື່ອເອົາວັດຖຸເອກະສານ ອອກຈາກຫໍສະມຸດໄດ້. ວັດຖຸສິ່ງຂອງ ສາມາດຢືມ ຜ່ານ Interlibrary Loan ໄດ້ເຫມືອນກັນ ເອກະສານ ສ່ວນຫລາຍ ຖ້າຕ້ອງການ ສາມາດອັດຖ່າຍຮູບເອົາໄດ້.

## ການພົວພັນເຖິງກຸ່ມປະຊາຄົມ

ກຸ່ມປະຊາຄົມຊາວເອເຊັຍຕະວັນອອກສຽງໄຕ້ ໄດ້ຊ່ວຍເຫລືອ ພະແນກເກັບກໍາມູນເດີມ ທາງດ້ານຄວາມຮູ້, ການຕິດຕໍ່, ຄວາມຊ່ຽວຊານ ແລະ ການບໍຣິຈາກວັດຖຸສິ່ງຂອງຕ່າງໆ. ໃນການຕອບແທນ, ພະແນກເກັບກໍາມູນເດີມ ກໍໄດ້ພຍາຍາມຍື່ນມືເຖິງກຸ່ມປະຊາຄົມ ໃຫ້ໄດ້ຫລາຍເທົ່າທີ່ຈະເຮັດໄດ້.

ຄນະປຶກສາ (Advisory Board) ຊຶ່ງປະກອບດ້ວຍ ສະມາຊິກຈາກ ກຸ່ມມວນຊົນ ແລະ ຄນະນັກວິຊາການ ຝ່າຍການສອນ ແລະ ຄົ້ນຄ້ວາ ໄດ້ຖືກຈັດຕັ້ງຂຶ້ນໃນປີ 1993 ເພື່ອຂຍາຍການພົວພັນເຖິງປະຊາຄົມຕ່າງໆ, ເພື່ອຮັກສາ ຄວາມສໍາພັນລະຫວ່າງປະຊາຄົມ ແລະ ມະຫາວິທຍາລັຍ, ແລະ ເພື່ອເກັບກໍາເອົາວັດຖຸສິ່ງຂອງຕ່າງໆ ເຂົ້າມາປະກອບສ່ວນ.

ພະແນກເກັບກໍາມູນເດີມ ໄດ້ສເນີ ທັສນະສຶກສາ ໃຫ້ແກ່ ຫ້ອງຮຽນຕ່າງໆ, ສະມາຊິກຈາກກຸ່ມປະຊາຄົມ, ພວກທີ່ມາຢ້ຽມຢາມມະຫາວິທຍາລັຍ ແລະ ອື່ນໆ ເປັນປະຈໍາ.

ຂ່າວສານຂອງ ພະແນກເກັບກໍາມູນເດີມ ທີ່ເຜີຍແຜ່ອອກທຸກໆສາມເດືອນ ໂດຍເປັນຫນັງສືພິມ ແລະ ທາງອິນເຕີເນັຕ, ໄດ້ສົ່ງໄປເຖິງສ່ວນບຸກຄົນກວ່າ 500 ຄົນ ແລະ ສົ່ງເຖິງການຈັດຕັ້ງຕ່າງໆທົ່ວປະເທດ.

ເວັບໄຊຕ໌ (website) ຂອງ ພະແນກເກັບກໍາມູນເດີມ ທີ່ sea.lib.uci.edu ມີ ບ່ອນຕໍ່ (links) ເຖິງ ເວັບໄຊຕ໌ຕ່າງໆ ທີ່ມີຄວາມສໍາຄັນກ່ຽວຂ້ອງ, ເຖິງຂ່າວສານຂອງ ພະແນກເກັບກໍາມູນເດີມ ສບັບຕ່າງໆ, ເຖິງການສແດງທາງອິນເຕີເນັຕ ທີ່ມີຊື່ວ່າ "Documenting The Southeast Asian American Experience" ຊຶ່ງມີຄວາມຫມາຍວ່າ "ການເກັບກໍາເອກະສານ ຄວາມປະສົບການ ຂອງ ຊາວເອເຊັຍອະເມຣິກັນ ທີ່ມາຈາກ ເອເຊັຍ ພາກຕາເວັນອອກສຽງໄຕ້."

## ມູນເດີມ ຂອງຊາວເອເຊັຍ ພາກຕາເວັນອອກສຽງໄຕ ທີ່ອອກເປັນເອກະສານ

Archibold, Randal C. (1997, January 26). Preserving pieces of refugee experience. *Los Angeles Times*, pp. A1, A20.

Bà Anne Frank - Đại Học UCI giới thiệu thư viện – Văn Khố Đông Nam Á. (1999, April-May). *Văn Hóa* 44, A47-48.

Fujita Rony, Dorothy, & Frank, Anne. (2003). Archiving histories: The Southeast Asian Archive at University of California, Irvine. *Amerasia Journal* 29(1).






